## ໝາຍສຳຄັນທີ່ເຮົາເຮັດເປັນບໍ່ຮູ້ບໍ່ເຫັນບໍ່ໄດ້
## ສູ້ອານາຄົດດ້ວຍຄວາມກ້າ

ໃນບໍ່ດົນມານີ້ນັກວິທະຍາສາດຜູ້ມີຊື່ສຽງຜູ້ໜຶ່ງໄດ້ເວົ້າອອກມາສູ່ປະຊາກອນໂລກວ່າ
ລາວຢ້ານວ່າໂລກນີ້ຈະບໍ່ຢູ່ຣອດອີກ 1000 ປີ ຂ້າງໜ້າ ມູນລະພາວະພິດທີ່ມະນຸດສ້າງຂຶ້ນມາໄດ້ໄປ
ທຳລາຍຊັ້ນບັນຍາກາດ ແລະຈະເຮັດໃຫ້ອຸນະພູມອາກາດໃນທົ່ວໂລກເພີ່ມຂຶ້ນ ເຮັດໃຫ້ເກີດມີລົມພະຍຸ
ຮ້ອນແລະນ້ຳແຂງຢູ່ຂົ້ວໂລກລະລາຍໄຫລຖ້ວມທະວີບຕ່າງໆ
ຫລາຍຄົນກໍເວົ້າຕ່າງກັນໄປຕ່າງໆນາໆກ່ຽວກັບຈຸດຈົບຂອງໂລກ.
ບາງຄົນກໍເວົ້າວ່າມະນຸດເຮົາຈະທຳລາຍລ້າງຜານມະນຸດເອງດ້ວຍສົງຄາມນິວເຄລຍ
ບາງຄົນກໍເວົ້າວ່າເມື່ອປະຊາກອນໂລກເພີ່ມຂຶ້ນ ໂລກຈະຂາດແຄນອາຫານແລະຊັບພະຍາກອນຕ່າງໆ
ບາງຄົນກໍເວົ້າວ່າຈະມີຫີນໃຫຍ່ຫລືອຸກາບດາມາຊົນໂລກແລະມະນຸດທຸທຸກຄົນບົນໜ້າໂລກຈະຖືກທຳລາ
ຍ
ບາງຄົນກໍຄິດວ່າຈະມີເອລ້ຽນຫລືມະນຸດຕ່າງດາວຈາກໂລກອື່ນເຂົ້າມາໃນໂລກເຮົາແລະທຳລາຍມະນຸດເ
ຮົາທຸກຄົນ. ຄິດວ່າພວກເຮົາທຸກຄົນຄົງມີຫລາຍສິ່ງຫລາຍຢ່າງທີ່ກັງວົນຢູ່ແລ້ວ
ພວກເຮົາທຸກຄົນຕ້ອງດີ້ນລົນທຳມາຫາກິນ ພະຍາຍາມປັບໂຕເຂົ້າກັບສັງຄົມ
ແລະຕໍ່ສູ້ກັບໂລກໄພໄຂ້ເຈັບ ຄວາມໂສກຄວາມເສົ້າຕ່າງໆ ສ່ວນໃຫຍ່ແລ້ວ
ບໍ່ມີຊີວິດຂອງຜູ້ໃດທີ່ລາບລື້ນໄປໝົດທຸກຢ່າງ
ບາງເທື່ອພວກເຮົາກໍມີປັນຫາຫລາຍເຫລືອເກີນຈົນກະທັ້ງວ່າບໍ່ຢາກຈະຢູ່ໃນໂລກນີ້ອີກຕໍ່ໄປ
ແນ່ນອນເຮົາທຸກຄົນທີ່ເກີດມາບໍ່ມີໃຜທີ່ຢາກໃຫ້ຊີວິດຂອງຕົນເຕັມໄປດ້ວຍຄວາມເຈັບປວດ,
ການອຶດຫິວ, ການອິດເມື່ອຍອ່ອນລ້າແລະການວິຕົກກັງວົນ. ພວກເຮົາທຸກຄົນຢາກຢູ່ໃນໂລກທີ່ດີກວ່ານີ້

ພີ່ນ້ອງທີ່ຮັກ ຂ້າພະເຈົ້າມີຂ່າວດີມາບອກ! ໂລກນີ້ກຳລັງຈະມາດັບແລ້ວ ແລະກໍຈະມີໂລກໃໝ່ທີ່ດີກວ່າ
ຕາມມາ ຄິດວ່າພວກເຮົາເກືອບໝົດທຸກຄົນຢາກຈະຮູ້ວ່າໂລກຂອງຈະຈົບລົງແນວໃດແລະເມື່ອໃດ.
ມັນຈະຈົບ ຕອນທີ່ເຮົາຍັງມີຊີວິດຢູ່ບໍ່? ຫລືວ່າຈະຈົບລົງອີກ 1000 ປີຂ້າງໜ້າ?
ມີໃຜແນ່ທີ່ຮູ້ວ່າໂລກຈະຈົບລົງແນວໃດ?
ຢູ່ປະເທດລາວເວລາຍ່າງໄປຕາມທະໜົນຫົນທາງໃນຫລາຍໂດຍສະເພາະຢູ່ຕໍ່ໜ້າຕະຫລາດເຊົ້າຫລືຂ້າ
ງໆໄປສະນີ ເຮົາຈະເຫັນວ່າມີໝໍດູໝໍເດົາຕາມຂ້າງທາງ ຢູ່ຕາມບ້ານຕ່າງໆກໍມີໝໍດູ
ມີຜີນາງທຽມທີ່ວ່າສາມາດເບິ່ງມໍຫລືສ່ອງອານາຄົດໄດ້
ແຕ່ຢາກຖາມແນ່ວ່າຄຳທີ່ໝໍດູເຫລົ່ານີເວົ້າອອກເຊື່ອຖືໄດ້ສ່ຳໃດແລະເປັນຈິງສ່ຳໃດ?ແລະພວກເຂົາສາມ
າດບອກໄດ້ບໍ່ວ່າໂລກນີ້ຈະຈົບລົງແນວໃດ?
ບາງຄົນກໍເວົ້າວ່າຢູ່ປະເທດລາວເຮົາແລະຢູ່ປະເທດຕ່າງໆມີໝໍດູໜ້ອຍເກີນໄປ
ເລີຍເຮັດໃຫ້ພວກເຂົາບໍ່ສາມາດບອກອານາຄົດທີ່ຖືກຕ້ອງໄດ້.

ການທີ່ມີໝໍດູໝໍທຳນາຍຫລືເທບພະຍາກອນໜ້ອຍນັ້ນບໍ່ແມ່ນປັນຫາ ແຕ່ອັນທີ່ເປັນປັນຫາກໍຄືວ່າ
ຈະຫາໝໍດູ ຫລືເທບພະຍາກອນທີ່ໃຫ້ຄຳທຳນວາຍຖືກຕ້ອງໄດ້ຢູ່ໃສ?
ຮູ້ບໍ່ວ່າໄດ້ມີຜູ້ພະຍາກອນກຜູ້ໜຶ່ງເຊິ່ງຄຳພະຍາກອນຂອງລາວຖືກຕ້ອງເປັນຈິງໝົດທຸກຢ່າງ?
ຮູ້ບໍ່ວ່າລາວຜູ້ນີ້ກໍຍັງສາມາດບອກເຮົາວ່າໂລກນີ້ຈະຈົບລົງແນວໃດ ຈະຈົບລົງໃນໄວໆນີ້ຫລືວ່າອີກ
1000 ປີ?

ຄົງບໍ່ຕ້ອງສົງໄສເລີຍວ່າຜູ້ທີ່ສ້າງໂລກນີ້ມາ ເຊິ່ງເປັນຜູ້ທີ່ພະຊົນຢູ່ເມື່ອໂລກນີ້ເກີດຂຶ້ນ
ຄືຜູ້ທີ່ຮູ້ດີວ່າໂລກນີ້ຈະມາເຖິງຈຸດອະວະສານມື້ໃດ

ພີ່ນ້ອງທີ່ຮັກ, ພະເຍຊູຕັດວ່າພະອົງຄືພະຜູ້ສ້າງ
ພະອົງສາມາດບອກເຮົາເຖິງສິ່ງທີ່ຈະເກີດຂຶ້ນໃຂອານາຄົດ ພະອົງເປັນຜູ້ນຳທາງທີ່ໄວ້ໃຈໄດ້.
ໂລກນີ້ຈະຈົບລົງແນວໃດຄົງບໍ່ມີໃຜຮູ້ດີໄປກວ່າພະຜູ້ສ້າງ?

ພະຄຳພີໄດ້ບອກພວກເຮົາເຖິງເຫດການອັນໜ້າຕື່ນເຕັ້ນໃນຊີວິດຂອງພະເຍຊູຄຣິດ
ໄດ້ມີມື້ໜຶ່ງພວກອັກຄະສາວົກໄດ້ພາພະອົງໄປເບິ່ງພະວິຫານທີ່ໄດ້ບູລະນະສ້າງຂຶ້ນມາໃໝ່ໂດຍລັດຖະບ
ານໂຣມມັນ. ວິຫານນີ້ແມ່ນໜຶ່ງໃນຈຳນວນວິຫານທີ່ມີຊື່ສຽງແລະສວຍງາມຂອງອານາຈັກໂຣມມັນ

ຫລັງຈາກທອດພະເນດເບິ່ງພະວິຫານ ພະເຍຊູຊົງຕອບເຂົາວ່າ, (ມັດທາຍ 24:2) “ສິ່ງທັງປວງເຫລົ່າ
ນີ້ພວກທ່ານເຫັນແລ້ວບໍ່ແມ່ນຫລື ເຮົາບອກພວກທ່ານຕາມຄວາມຈິງວ່າ ກ້ອນຫີນທີ່ຊ້ອນທັບກັນຢູ່ທີ່ນີ້
ຈະຖືກທຳລາຍລົງຈົນບໍ່ເຫລືອຈັກກ້ອນດຽວ”

ພະວິຫານນີ້ເປັນພະວິຫານທີ່ຍິ່ງໃຫຍ່ທີ່ສຸດຂອງຊົນຊາດຢິວ
ແຕ່ວ່າເວລານັ້ນພະເຍຊູໄດ້ທຳນາຍວ່າວິຫານນີ້ຈະຖືກທຳລາຍລົງຢ່າງບໍ່ເຫລືອຫລໍ
ພວກອັກຄະສາວົກກໍແປກປະຫລາດໃຈ! ແລະພວກເຂົາກໍຂຶ້ນໄປທີ່ພະເຂົາໝາກກອກເທດ
ພວກເຂົາກໍຖາມພະເຍຊູຄຳຖາມໜຶ່ງ
ຄິດວ່າຖ້າພວກເຮົາຢູ່ໃນສະໄໝນັ້ນພວກເຮົາກໍຈະຖາມຄຳຖາມນີ້ຄືກັນ ຄຳຖາມນັ້ນຄື

(ມັດທາຍ 24:3) “ພວກສາວົກມາເຝົ້າພຣະອົງເປັນການສ່ວນໂຕແລະກາບທູນວ່າ, ‘ຂໍໂຜດໃຫ້ພວກຂ້າ
ພຣະອົງຊາບແດ່ວ່າ ເຫດການເຫລົ່ານີ້ຈະເກີດຂຶ້ນເວລາໃດ ສິ່ງໃດເປັນຫມາຍສຳຄັນວ່າ ທ່ານຈະມາ
ແລະສະໄຫມເກົ່າຈະສິ້ນສຸດລົງ’”

ເຫັນຫລືບໍ່ວ່າ ພວກອັກຄະສາວົກຮູ້ສຶກວ່າ ຖ້າຫາກວ່າພະວິຫານນີ້ຈະຖືກທຳລາຍ
ສິ່ງນີ້ຈະຕ້ອງກ່ຽວເນື່ອງເຖິງການສະເດັດກັບມາຂອງພະເຢຊູແລະຈຸດອະວະສານຂອງໂລກ
ແຕ່ວ່າໃນໜັງສື ມັດທາຍ ບົດທີ 24 ເຮົາໄດ້ເຫັນວ່າ ພະເຢຊູໄດ້ຕັດເຖິງສອງເຫດການທີ່ຕ່າງກັນ.
ໜຶ່ງໃນສອງເຫດການນັ້ນກໍຄືການສະເດັດກັບມາຢ່າງສະຫງ່າລາສີຂອງພະເຢຊູແລະການສ້າງອານາຈັກ
ອັນຕະຫລອດໄປເປັນນິດຂອງພະອົງເທິງແຜ່ນດິນໂລກ

ເຫດການອັນທີ່ສອງນັ້ນຄືການຫລົ້ມສະຫລາຍຂອງກຸງເຢຣູຊາເລັມ ແລະພະວິຫານ
ແລະໄດ້ມີຫລາຍຄົນເຫັນເຫດການອັນທີສອງນີ້. ເໝືອນທີ່ພະເຢຊູໄດ້ທຳນາຍໄວ້ໃນພະທຳ ມັດທາຍ
24:15,16 ໃນຕອນນັ້ນພະເຢຊູໄດ້ບອກເຖິງສິ່ງທີ່ ຈະເກີດຂຶ້ນກັບພະວິຫານ. ພະອົງໄດ້ຕັດວ່າ "ເຫດ
ສັນນັ້ນ ເມື່ອໃດທ່ານທັງຫລາຍເຫັນສິ່ງທີ່ໜ້າກຽດໜ້າຊັງ ທີ່ເຮັດໃຫ້ເກີດວິບັດຕັ້ງຢູ່ໃນສະຖານທີ່ສັກ
ສິດ ຕາມພຣະທັມທີ່ຊົງກ່າວໄວ້ດ້ວຍດານິເອນຜູ້ປະກາດພຣະທັມນັ້ນ (ໃຫ້ຜູ້ອ່ານເຂົ້າໃຈເອົາ) ເມື່ອນັ້ນ
ໃຫ້ຜູ້ທີ່ຢູ່ໃນແຂວງຢູດາຍປົບໜີໄປຍັງພູ"

ດານິເອນໄດ້ທຳນວາຍໄວ້ວ່າຊົນຊາດຢິວຈະໃຊ້ເວລາຫລາຍປີເພື່ອທີ່ຈະເຮັດສຳເລັດພາລະກິດພິເສດ
ແຕ່ວ່າພະເຢຊູໄດ້ເຕືອນປະຊາຊົນຄົນຢິວໂດຍຜ່ານຜູ້ພະຍາກອນຂອງພະອົງວ່າເຫດການເຫລົ່ານີ້
ຈະເກີດຂຶ້ນໃນໄວໆ

(ມັດທາຍ 24:17,18) ພະເຢຊູໄດ້ຕັດວ່າເມືອງນີ້ຈະຖືກທຳລາຍ
ແລະພະອົງໄດ້ໃຫ້ຄຳແນະນຳແກ່ປະຊາຊົນວ່າ (ໃນ ຂໍ້ 17,18) "ຜູ້ທີ່ຢູ່ເທິງຫລັງຄາເຮືອນ ຢ່າໃຫ້ລົງ
ມາເກັບເອົາສິ່ງຂອງທີ່ຢູ່ໃນເຮືອນຂອງຕົນອອກໄປ ສ່ວນຜູ້ທີ່ຢູ່ຕາມທົ່ງນາກໍຢ່າຕ່າວຄືນມາເອົາເສື້ອຜ້າ
ຂອງຕົນ"

ຈະເວົ້າອີກຢ່າງໜຶ່ງກໍຄື ພະອົງໄດ້ບອກໃຫ້ເຂົາໜີເອົາຊີວິດລອດ
ເພາະວ່າເມື່ອພວກເຂົາເຫັນສັດຕູເຂົ້າມາລ້ອມກຸງເຢຣູຊາເລັມ
ນັ້ນໝາຍເຖິງຈຸດຈົບຂອງເຢຣູຊາເລັມໃກ້ມາແລ້ວ ພະເຢຊູໄດ້ກ່າວໃນພະຄຳ ລູກາ 21:20 ວ່າ "ເມື່ອ
ໃດທ່ານເຫັນກອງທັບມາຕັ້ງອ້ອມຮອບກຸງເຢຣູຊາເລັມ ເມື່ອນັ້ນທ່ານຈົ່ງຮູ້ວ່າຄວາມຈິບຫາຍຂອງກຸງນັ້ນ
ເຂົ້າມາໃກ້ແລ້ວ"
ຫລັງຈາກນັ້ນພະອົງກໍຕັດກັບເຂົາຕໍ່ໄປວ່າເມື່ອໃດກໍຕາມທີ່ພວກເຂົາເຫັນສັດຕູກຳລັງມາ
ກໍໃຫ້ພວກເຂົາໜີ ດັ່ງໃນ ລູກາ 21:22 ກ່າວວ່າ "ເພາະວ່າເວລານັ້ນເປັນວັນລົງໂທດ ເພື່ອຈະໃຫ້ສິ່ງ
ສາຣະພັດທີ່ຂຽນໃນພຣະຄັມພີສຳເຣັດ"

ໃນຂໍ້ທີ 24 ໄດ້ກ່າວວ່າ “ເຂົາຈະລົ້ມລົງເສັຽດ້ວຍຄົມດາບ ແລະຕ້ອງຖືກກວາດເອົາໄປເປັນຊະເລີຍໃນທົ່ວປະເທດ ແລະຄົນຕ່າງຊາດຈະຢຽບຢໍ່າກຸງເຢຣູຊາເລັມ ຈົນກວ່າເວລາກໍານົດຂອງຄົນຕ່າງຊາດນັ້ນຈະຄົບຖ້ວນ”

ໃນປີ ຄ.ສ. 66 ຫຼື 33 ປີຫລັງຈາກພະເຍຊູໄດ້ພະຍາກອນ, ກອງກໍາລັງໂຣມມັນພາຍໄຕ້ການນໍາຂອງເຊສຕິອັດສ໌ (Cestius) ໄດ້ເຮັດການກະບົດໃນກຸງເຢຣູຊາເລັມ
ພວກເຂົາໄດ້ວາງທະຫານອ້ອມໂຕເມືອງ ແຕ່ວ່າປະຊາຊົນທີ່ຢູ່ໃນເມືອງເຮັດໄດ້ເຮັດການຕໍ່ສູ້
ແລະໃນທີ່ສຸດ
ກອງກໍາລັງໂຣມມັນກໍຖອຍກອງທັບກັບຄືນທັ້ງທີ່ວ່າພວກເຂົາເກືອບຈະຍຶດໂຕເມືອງໄດ້ແລ້ວ
(ອ້າງອີງມາຈາກ ໜັງສື **Eusebius, Church History,** ເຫລັ້ມ 3 ບົດທີ 5)

ຜູ້ທີ່ເຊື່ອຄໍາແນະນໍາຂອງພະເຍຊູໄດ້ໜີຈາກກຸງເຢຣູຊາເລັມ
ບໍ່ມີຄຣິສຕຽນຄົນໃດຖືກຂ້າເມື່ອກອງກໍາລັງໂຣມມັນກັບເຂົ້າມາບຸກກຸງເຢຣູຊາເລັມອີກເທື່ອໜຶ່ງເມື່ອ ປີ ຄ.ສ. 70 ແຕ່ວ່າມີຄົນເປັນຈໍານວນ 1,100,000 ຄົນ ຖືກຂ້າ
ເພາະພວກເຂົາບໍ່ເຮັດຕາມຄໍາແນະນໍາທີ່ພະເຍຊູບອກວ່າໃຫ້ພວກເຂົາໜີຈາກເມືອງຕອນເມື່ອກອງກໍາລັງໂຣມມັນຖອຍທັບໃນປີ ຄ.ສ. 66

ນີ້ກໍເປັນບົດຮຽນທີ່ສໍາຄັນທີ່ຈະສຶກສາຄໍາພະຍາກອນແລະການໃຫ້ຄວາມສໍາຄັນຂອງໝາຍສໍາຄັນ(ເຄື່ອງຫມາຍ)ແຫ່ງການເວລາ.
ຄົນທີ່ເຊື່ອພະຄຣິດແລະເຝົ້າລະວັງໝາຍສໍາຄັນຕ່າງໆທີ່ພະອົງບອກແມ່ນປອດໄພ
ແຕ່ວ່າຄົນທີ່ບໍ່ເຊື່ອນັ້ນໄດ້ພິນາດໄປ. ເມື່ອຈຸດຈົບຂອງໂລກມາເຖິງ
ຜູ້ເຊື່ອທີ່ເຝົ້າລະວັງຈະໄດ້ຮັບຄວາມລອດພົ້ນ ແຕ່ຄົນທີ່ບໍ່ເຊື່ອຈະພິນາດໄປ.

ສ່ວນພະວິຫານອັນສວຍງາມນັ້ນເດ ເປັນແນວໃດ?

ໄທທັດສ໌ (Titus) ໄດ້ບອກໃຫ້ທະຫານລາວບໍ່ໃຫ້ເຮັດຫຍັງຕໍ່ພະວິຫານ
ແຕ່ວ່າກໍໄດ້ມີນາຍທະຫານຄົນໜຶ່ງໄດ້ໂຍນກະບອງໄຟເຂົ້າໄປໃນປະຕູພະວິຫານ
ເລີຍເຮັດໃຫ້ພະວິຫານນັ້ນລຸກໄມ້ປານເປວໄຟນະລົກ

ພະວິຫານຖືກທໍາລາຍຢ່າງຍ້ອຍຍັບ ບໍ່ມີຫີນຈັກກ້ອນເຫລືອຢູ່.
ສິ່ງນີ້ໄດ້ເກີດຂຶ້ນຕາມຄໍາທໍານວາຍທຸກຢ່າງຂອງພະເຍຊູ ເຊິ່ງໄດ້ທໍານວາຍເອົາໄວ້ 40 ປີ
ກ່ອນເຫດການນີ້ເກີດຂຶ້ນ.
ແລ້ວພວກກເຮົາຈະປ່ອຍລະເລີຍບໍ່ເອົາໃຈໃສ່ຕໍ່ໝາຍສໍາຄັນທີ່ພະເຍຊູໃຫ້ເຮົາກ່ຽວກັບຈຸດອະວະສານຂອ

ໆໂລກບໍ?
ຫລືວ່າພວກເຮົາຄວນຈະໃຫ້ຄວາມສົນໃຈຕໍ່ຄຳເຕືອນແລະຕຽມພ້ອມຕະຫລອດເວລາວ່າແມ່ນຫຍັງຈະເກີດຂຶ້ນໃນອານາຄົດ? ເຮົາຈະຮູ້ໄດ້ແນວໃດວ່າຈຸດອະວະສານຂອງໂລກແມ່ສໃກ້ເຂົ້າມາແລ້ວ?

ປະຊາຊາດຕ່າງໆຈະລຸກຂຶ້ນຕໍ່ສູ້ກັນ.

(ມັດທາຍ 24:7) ໃຫ້ເຮົາມາສຶກສາເບິ່ງໝາຍສຳຄັນຫລືສັນຍາລັກທີ່ກຳລັງເກີດຂຶ້ນທຸກມື້ນີ້ ໃນມັດທາຍ 24:7 ພະຄຣິດໄດ້ກ່າວວ່າ “ດ້ວຍວ່າປະເທດຕໍ່ປະເທດ ແລະອານາຈັກຕໍ່ອານາຈັກຈະສູ້ຮົບກັນ ທັງຈະເກີດການອຶດຢາກແລະແຜ່ນດິນໄຫວໃນບ່ອນຕ່າງໆ” ສັດຕະວັດທີ 20 ໄດ້ກາຍເປັນສັດຕະວັດແຫ່ງການນອງເລືອດທີ່ສຸດໃນປະຫວັດສາດມວນມະນຸດ. ຍ້ອນກັບໄປ ປີ 1914 ເມື່ອສົງຄາມໂລກຄັ້ງທີໜຶ່ງ ມີຄົນຄົນຕາຍຫລາຍກວ່າ 20 ລ້ານຄົນ

ສົງຄາມໂລກຄັ້ງທີສອງ ມີຄົນຕາຍຫລາຍກວ່າ 50 ລ້ານຄົນ ເມື່ອສົງຄາມໂລກຄັ້ງທີສອງສິ້ນສຸດລົງ ທຸກຄົນກໍຄິດວ່າ ຄວາມບ້າຄັ້ງໃນການນອງເລືອດຂອງມະນຸດໄດ້ຈົບລົງແລ້ວ
ແຕ່ວ່າມັນກໍຍັງມີສົງຄາມເກົາຫລີ, ສົງຄາມວຽດນາມ, ທົ່ງສັງຫານທີ່ກຳປະເຈຍ,
ສົ່ງຄາມລະຫວ່າງອາເມລິກາແລະອີລັກ, ການຂ້າລ້າງເຜົ່າພັນ ບອດສເນັຍ ແລະການຂ້າລ້າງເຜົ່າສຸດສິດສ໌ (Tsutsis) ໃນອາຟຣິກາ ແລະອີກຫລາຍສົງຄາມ.
ພວກເຮົາຄິດວ່າໂລກນີ້ເປັນບ່ອນຢູ່ອັນປອດໄພສຳລັບພວກເຮົາ
ແຕ່ວ່າມັນຊໍ້າພັດເກີດມີການຂ້າຟັງລັບແທງກັນຫລາຍເຫລືອເກີນ
ເບິ່ງຄືວ່າໂລກນີ້ໄດ້ກາຍເປັນໂລກແຫ່ງການຂ້າຟັນໄປແລ້ວ.
ນີ້ກໍແມ່ນເຄື່ອງໝາຍໜຶ່ງຂອງການສິ້ນສຸດຂອງໂລກຈະມາເຖິງ. ປາກເວົ້າວ່າຮັກສາຕິສຸກ ແຕ່ມືກຳປືນພ້ອມທີ່ຈະເຮັດສົງຄາມ. ຄຳພະຍາກອນກ່ຽວກັບຄວາມສະຫງົບແລະການຕຽວໂຕກໍມີຄືກັນ

(1 ເທຊະໂລນີກ 5:3) “ເມື່ອໃດເຂົາທາກເວົ້າວ່າ, ‘ສງົບສຸກແລະປອດພັຍຢູ່ແລ້ວ’ ເມື່ອນັ້ນແຫລະ, ຄວາມວິນາດຈິບຫາຍກໍຈະມາເຖິງເຂົາໃນທັນທີ...”

ພວກເຮົາສົນທະນາໂອ້ລົມກັນເຖິງສັນຕິສຸກ ແຕ່ວ່າສັນຕິສຸກກໍຍັງບໍ່ມີ, ທຸກຄົນຢາກມີສັນຕິສຸກ!
ແຕ່ວ່າມັນກໍເປັນພຽງການສົນທະນາກັນ!
ພະຄຳພີໄດ້ກ່າວວ່າໃນຍຸກສຸດທ້າຍມະນຸດຈະມີຄວາມສາມາດໃນການທຳລາຍລ້າງໂລກ

ພະຄຳພະນິມິດ 11:18 ໄດ້ກ່າວວ່າ “ຝ່າຍນາໆຊາດກໍມີຄວາມເຄືອງແຄ້ນ ແຕ່ພຣະພິໂຣດຂອງພຣະອົງກໍມາເຖິງແລ້ວ ... ແລະເຖິງເວລາແລ້ວທີ່ພຣະອົງຈະຊົງທຳລາຍພວກຄົນທີ່ທຳລາຍແຜ່ນດິນໂລກ”

ກ່ອນໜ້ານີ້ມະນຸດບໍ່ເຄີຍມີຄວາມສາມາດທຳລາຍສິ່ງກໍ່ສ້າງຕ່າງໆໃນໂລກ
ແຕ່ເມື່ອເຂົາໄດ້ປະດິດອາວຸດນິວເຄລຍ ເຂົາກໍມີຄວາມສາມາດທີ່ຈະທຳລາຍລ້າງໂລກ.
ພວກເຮົາເຄີຍຄິດວ່າເມື່ອສະຫະລັດອາມາລິການແລະສະຫະພາບລັດເຊຍເຊັນສັນຍາກັນວ່າຈະທຳລາຍ
ອາວຸດນິວເຄລຍຫລືອາວຸດອັນຕະລາຍຈຳພວກນີ້ຖິ້ມ ພວກເຮົາກໍບໍ່ມີຫຍັງທີ່ຈະຕ້ອງຢ້ານ.
ແຕ່ວ່າຊໍ້າພັດໄດ້ມີປະເທດອື່ນອີກຫລາຍປະເທດຜະລິດອາວຸດອັນຮ້າຍແຮງຕ່າງໆຂຶ້ນມາຢ່າງຫລວງຫລ
າຍ ເພື່ອມາຕໍ່ສູ້ກັບສັດຕູຂອງພວກເຂົາ ລັດເຊຍໄດ້ເກັບຮັກສາອາວຸດສົງຄາມທີ່ຮ້າຍໄວ້ໃນສາງອາວຸດ
ແຕ່ວ່າບໍ່ຮູ້ວ່າເກີດຂຶ້ນໄດ້ແນວໃດ ອາວຸດຈຳພວກນີ້ຢ່າງນ້ອຍ 100 ຊິ້ນ ໄດ້ຫາຍໄປ
ແລະຕົກຢູ່ກໍາມືຜູ້ທີ່ພ້ອມແລ້ວທີ່ຈະຂາຍຫລືໃຊ້ມັນ
ເລີຍເຮັດໃຫ້ພວກກໍ່ການຮ້າຍໄດ້ພົບຫົນທາງທີ່ຈະຊື້ຫລືລັກອາວຸດນິວເຄລຍເຫລົ່ານີ້.
ແລ້ວອາວຸດເຫລົ່ານີ້ຕົກຢູ່ໃນມືຂອງໃຜ? ແລ້ວພວກເຂົາຈະເອົາມັນໄປເຮັດຫຍັງໃນໄວໆນີ້?
ຂະໜາດຂອງມັນນ້ອຍກວ່າກະເປົາເດີນທາງ ພວກເຂົາເອົາມັນເຊື່ອງໄວ້ບ່ອນໃດກໍໄດ້
ແຕ່ອາວຸດເຫລົ່ານີ້ພຽງແຕ່ອັນດຽວເທົ່ານັ້ນກໍສາມາດທຳລາຍເມືອງຂະໜາດໃຫຍ່ເທົ່າກັບ ຊານ
ຟຣານສິສໂກ ຫລື ບອມເບໄດ້.

ການອຶດຫິວ ການກັນດານອາຫານ

ພະເຈົ້າຕັດຈະມີໄພພິບັດຕ່າງໆນາໆໃນຍຸກສຸດທ້າຍ
ມັດທາຍ 24:7 “ທັງຈະເກີດການອຶດຢາກແລະແຜ່ນດິນໄຫວໃນບ່ອນຕ່າງໆ”

ຫລາຍທີ່ໃນໂລກນີ້ໄດ້ເກີດມີການອຶດຢາກ. ເຂົາໄດ້ປະເມີນອອກມາວ່າ
ໃນປີໜຶ່ງມີຄົນມີຄົນຂາດແຄນອາຫານຫລາຍປະມານ 57 ລ້ານ ຄົນ
ແລະມີຄົນຕາຍຍ້ອນຂາດອາຫານ 156,000 ຄົນ ຕໍ່ມື້

ມີຄົນຫລາຍກວ່າ 6,000 ລ້ານຄົນໃນໂລກນີ້ ໃນເວລາດຽວກັນ 60% ຂາດສານອາຫານ 20%
ຕ້ອງຕາຍໂດຍການຂາດອາຫານ.
ພະເຍຊູໄດ້ຕັດວ່າຈະເກີດມີການກັນດານອາຫານເຊິ່ງເປັນໝາຍສຳຄັນຂອງການສິ້ນສຸດຂອງໂລກ

ແຫລ່ງໜ່ວຍງານຂໍ້ມູນໄດ້ບອກເຮົາວ່າເມື່ອປະຊາກອນໂລກມີຫລາຍເກີນກວ່າປະລິມານອາຫານທີ່ຈະສ
ະໜອງ ກໍຈະເກີດມີການກັນດານອາຫານໄປທົ່ວໂລກ
ເກີດມີໂລກລະບາດຕ່າງໆແລະສິ່ງທີ່ຫລີກລ້ຽງບໍ່ໄດ້ນັ້ນກໍຄືສົງຄາມຍາດຊິງອາຫານ.
ໃນແຕ່ລະມື້ຄົນເກີດຂຶ້ນມາໃໝ່ເປັນຫລາຍພັນຫລາຍແສນຄົນ
ແລ້ວເຮົາຈະເອົາອາຫານມາແຕ່ໃສມາໃຫ້ເຂົາກິນ
ທັ້ງທີ່ວ່າສອງສ່ວນສາມຂອງປະຊາກອນໂລກນີ້ກຳລັງຕົກຢູ່ໃນຄວາມຫິວໂຫຍ?

(ລູກາ 21:25) ພະເຍຊູໄດ້ກ່າວກ່ຽວກັບຄວາມວິກິດສັບສົນໃນວັນສຸດທ້າຍຂອງໂລກວ່າ "...ຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆຊຶ່ງມີຄວາມສງົບສົນເທ..."

ໂລກລະບາດ ໂລກຕິດຕໍ່ຮ້າຍແຮງຕ່າງໆນາໆ

(ມັດທາຍ 24:7) ພະເຍຊູໄດ້ຕັດວ່າຈະມີໂລກລະບາດໆຕ່າງໆນາໆ
ໃນພະຄຳພີສະບັບພາສາອັງກິດຈະເວົ້າແຈ້ງກວ່າສາລາວ ໃນພະຄຳພີລາວໄດ້ເວົ້າວ່າ "...ຈະເກີດການອຶດຢາກແລະແຜ່ນດິນໄຫວໃນບ່ອນຕ່າໆ" ແຕ່ໃນພາສາອັງໄດ້ເວົ້າວ່າ "...ຈະເກີດການອຶດຢາກແລະໂລກລະບາດໂລກຕິດຕໍ່ຕ່າງໆ..."

ປະຈຸບັນນີ້ ໄດ້ເກີດມີໂລກຕິດຕໍ່ຫລາຍປະເພດເຫລືອເກີນ
ເຖິງແມ້ວ່າມະນຸດເຮົາຈະມີຢຸບຢາທີ່ທັນສະໄຫມກໍຕາມ ແຕ່ກໍຍັງຕາມບໍ່ທັນພະຍາດຕິດຕໍ່ເຫລົ່ານີ້

ເຮົາຈະຍົກຊື່ໂລກຕິດຕໍ່ນີ້ພຽງແຕ່ສອງສາມໂລກເທົ່ານັ້ນເຊັ່ນ: ໂລກເອດສ໌, ໂລກມາລາເລຍ, ໂລກປອດອັກເສບ, ວັນນະໂລກ, ໂລກ ອີໂບລາ (Ebola disease) ເຊິ່ງຂ້າເຮົາຕາຍໄດ້ທຸກເມື່ອຄົນທີ່ເປັນໂລກນີ້ຈະມີໄຂ້ສູງ ມີເລືອດອອກທາງໃນ ສ່ວນໃຫຍ່ແລ້ວໂລກນີ້ເກີດຢູ່ອາຟຣິກາ
ໂລກກາມະໂລກສາຍພັນໃໝ່, ໂລກໝອງໃນ, ແລະ ອະຫິວາ.
ອົງການສຸຂະພາບໂລກໄດ້ລາຍງານວ່າປະຈຸບັນນີ້ມີຄົນປ່ວຍເປັນໂລກເອດແລ້ວຈຳນວນ 40 ລ້ານຄົນ.
ຖ້າບໍ່ມີຫຍັງມາແກ້ໄຂປະຊາກອນຂອງຫລາຍໆປະເທດຈະຕ້ອງຫລັບຕາລາໂລກໄປແນ່ນອນ

ສະພາບແວດລ້ອມເປັນພິດກໍເປັນໝາຍສຳຄັນໜຶ່ງຂອງວັນສຸດທ້າຍ. ພະຄຳພີໄດ້ພະຍາກອນໃນເອຊາຢາ 51:6 ວ່າ "ຈົ່ງແຫງນຕາເບິ່ງຟ້າສວັນ ແລະມອງເບິ່ງໂລກເບື້ອງລຸ່ມ ເພາະວ່າຟ້າສວັນຈະສູນສິ້ນໄປເຫມືອນຄວັນ ແລະແຜ່ນດິນໂລກຈະສລາຍໄປເຫມືອນຢ່າງເສື້ອຜ້າ"
ໃນພະຄຳພີພາສາອັງກິດເຂົາໄດ້ໃຊ້ຄຳວ່າ "ແກ່ຊະລາ" ແທນຄຳວ່າ "ສລາຍ"
ຫລືຈະເວົ້າອີກຢ່າງໜຶ່ງກໍຄືວ່າ ພະຄຳພີໄດ້ເວົ້າວ່າໂລກນີ້ຈະຕ້ອງແກ່ຊະລາລົງ
ແລະທ້ອງຟ້າຈະສູນສິ້ນໄປ
ທ້ອງຟ້າຂອງຫລາຍໂຕເມືອງໄດ້ຖືກປົກຄຸມໄປດ້ວຍຄາບອນໄດອອກໄຊດ໌ແລະຄວນພິດຫລືສານເຄມີຕ່າງໆແລະພວກເຮົາກໍຫາຍໃຈເອົາສານພິດເຫລົ່ານີ້ເຂົ້າໄປໃນປອດຂອງເຮົາ.
ປ້າຍຕິດຢູ່ຕາມຫົວເມືອງຕ່າງໆເຕືອນໃຫ້ເຮົາໃຫ້ເຖິງອັນຕະລາຍຂອງມູນລະພາວະພິດ.
ມີປະຊາຊົນໃນຫລາຍໂຕເມືອງບໍ່ສາມາດດື່ມນ້ຳຈາກເມືອງເຂົາ
ເພາະວ່າໃນນ້ຳນັ້ນມັນມີສານພິດອັນຕະລາຍຫລາຍເຫລືອເກີນ.
ກາກອາຕອມໄດ້ກາຍເປັນປັນຫາໃຫຍ່ເຊິ່ງເຂົາບໍ່ຮູ້ວ່າເຂົາຈະຖິ້ມຫລືຈະເກັບມັນໄວ້ບ່ອນໃດ.

ຄົນງານຂອງໂຮງງານທີ່ເຮັດກ່ຽວກັບອາຕອມຫລືເຄມີອັນຕະລາຍຕ້ອງໄດ້ຮັບເງິນຊົດເຊີຍສຳລັບສານພິດທີ່ເຂົາຮັບເອົາເຂົ້າໄປໃນຮ່າງກາຍຂອງເຂົາໃນຂະນະທີ່ເຂົາກຳລັງເຮັດວຽກ.

ຈຳນວນປະຊາກອນໃນໂລກນີ້ເພີ່ມໂຕເລກຂຶ້ນໄວຫລາຍ
ມັນກໍເລີຍເຮັດໃຫ້ເຂົາຕ້ອງປະເຊີນກັບບັນຫາໃຫຍ່ຕ່າງໆແລະຕ້ອງດີ້ນລົນເພື່ອເອົາຊີວິດລອດ
ແລ້ວພວກເຮົາຈະສາມາດມີພະລັງງານ, ມີອາກາດທີ່ບໍລິສຸດ ແລະມີນ້ຳສະອາດໄດ້ແນວໃດ?
ແລ້ວພວກເຮົາຈະເອົາອາຫານມາແຕ່ໃສ?

ແຜ່ນດິນໄຫວ

ພະຄຳພີໄດ້ກ່າວໃນ ມັດທາຍ 24:7 ວ່າຈະເກີດມີແຜ່ນດິນໄຫວ "..ທັງຈະເກີດການອຶດຢາກແລະແຜ່ນດິນໄຫວໃນບ່ອນຕ່າງໆ"

ໃນຊ່ວງບໍ່ດົນມານີ້ພວກເຮົາຄົງເຫັນຕາມໂທລະທັດ, ໜັງສືພິມແລະສື່ຕ່າງໆວ່າ
ໄດ້ມີເຫດການແຜ່ນດິນໄຫວເກີດຂຶ້ນຢູ່ບ່ອນນັ້ນຢູ່ບ່ອນນີ້
ແລະແຮງສັ່ນສະເທືອນແລະຄວາມເສຍຫາຍກໍຫລາຍແລະໃຫຍ່ຂຶ້ນເລື້ອຍໆ

ໃນປີໜຶ່ງໆໂລກນີ້ມີແຜ່ນດິນໄຫວແບບໃຫຍ່ເຖິງ 6,000 ເທື່ອ ໃນ 90
ປີທີ່ແລ້ວມີຄົນຕາຍຍ້ອນແຜ່ນດິນໄຫວເຖິງ 1,500,000 ຄົນ

ໃນບໍ່ດົນມານີ້ ພວກເຮົາກໍຄົງເຫັນຕາມທໍລະທັດແລະສື່ຕ່າງໆວ່າໄດ້ມີແຜ່ນດິນໄຫວ ແລະເຮັດໃຫ້
20,000 ເຖິງ 30,000 ຊີວິດຕົກຢູ່ໃນຄວາມທຸກທໍລະມານສິ້ນເນື້ອປະດາຕົວ.
ຄິດວ່າຫລາຍຄົນເຮົາຄົງຈຳໄດ້.

(ລູກາ 21:11,25) ພະຄຳພີໄດ້ເວົ້າວ່າ "ແລະຈະເກີດການອຶດຢາກກັບພຍາດຮ້າຍແຮງໃນບ່ອນຕ່າງໆຈະເກີດການໜ້າຢ້ານອັນພິລຶກເພິງກົວ ແລະມີໝາຍສຳຄັນຈາກທ້ອງຟ້າ, ຈະມີໝາຍສຳຄັນໃນດວງອາທິດ ໃນດວງຈັນ ແລະໃນດວງດາວທັງປວງ ແລະຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆຊຶ່ງມີຄວາມສງົບສົນເທເພາະສຽງກ້ອງອັນໃຫຍ່ຫລວງຂອງທະເລແລະຟອງນ້ຳ"

ໃຫ້ສັງເກດນຳກັນວ່າ ພະຄຳພີໄດ້ເວົ້າວ່າຈະມີຄວາມສະຫງົບສົນເທອັນໃຫຍ່ຫລວງຂອງທະເລ.
ມີຫລາຍໆເຫດການຜິດປົກກະຕິທາງທຳມະຊາດອັນກ່ຽວກັບນ້ຳແລະອາກາດທີ່ເກີດຂຶ້ນທົ່ວໂລກເຊັ່ນ:
ລົມພາຍຸໄຕ້ຝຸ່ນ, ພາຍຸໂທເນໂດ, ພາຍຸເຮີຣິເຄນ, ພູເຂົາໄຟລະເບີດ
ສິ່ງເຫລົ່ານີ້ລ້ວນແຕ່ເປັນໄພຂົ່ມຂູ່ຊີວິດແລະຊັບສິນຂອງມະນຸດ.

ຄວາມຮູ້ຂອງມະນຸດຈະເພີ່ມຂຶ້ນ

ທູດສະຫວັນໄດ້ລົງມາບອກກັບດານີເອນໃນພະທຳ ດານີເອນ 12:4 ວ່າ "...ຈົ່ງຮຳຫນັງສືມ້ວນນັ້ນໄວ້ ແລະຕິຕຣາປະທັບໄວ້ຈົນເຖິງເວລາສຸດທ້າຍ ໃນເວລານັ້ນ ຄົນຈຳນວນຫລາຍຈະແລ່ນເຕັ້ນຊອກຫາຄວາມເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນ"
ໃນພະຄຳພີສະບັບພາສາອັງກິດເຂົາໄດ້ແປຫລືຊຽນຕອນທ້າຍຂອງຂໍ້ຄວາມນີ້ວ່າແນວນີ້ "...ຄົນຈຳນວນຫລາຍຈະແລ່ນເຕັ້ນຊອກຫາຄວາມເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນ ແລະຄວາມຮູ້ຂອງເຂົາຈະເພີ່ມຂຶ້ນ"

ຄອມພິວເຕີແລະເຄື່ອງມືທີ່ທັນສະໄໝທີ່ເຮົາເຫັນຕາມຫ້າງຮ້ານຕ່າງໆໄດ້ສະບອກໃຫ້ເຮົາຮູ້ວ່າຄວາມຮູ້ຂອງມະນຸດເພີ່ມຂຶ້ນຢ່າງລວດເລວ.
ຕຳລາຮ່ຳຮຽນບາງເຫລັ້ມກໍລ້າສະໄໝກ່ອນທີ່ມັນຈະຖືກພິມອອກມາເພາະວ່າເນື້ອຫາຂອງມັນບໍ່ທັນຕໍ່ຍຸກຕໍ່ສະໄໝ!
ມະນຸດໄດ້ຄົ້ນພົບຂໍ້ມູນທາງການເພດແລະການເຮັດໃຫ້ມະນຸດມີຊີວິດຍາວຂຶ້ນຢ່າງລວດເລວເຫລືອເກີນຈົນພວກເຂົາບໍ່ມີເວລາພໍທີ່ຈະເອົາມັນອອກມາເປີດເຜີຍຕໍ່ສາທາລະນະຊົນ. ນັກຮຽນພະຄຳພີເຊື່ອວ່າພະຄຳດານີເອນໄດ້ພະຍາກອນ(ຖືກຕ້ອງແລ້ວ)ກ່ຽວກັບຄວາມຮູ້ຂອງມະນຸດຈະເພີ່ມຂຶ້ນ.
ບໍ່ຕ້ອງສົງໃສເລີຍທີ່ວ່າຄວາມຮູ້ຂອງມະນຸດເພີ່ມຂຶ້ນຢ່າງໄວວາໃນຊ່ວງ 100 ປີມານີ້
ຄວາມຮູ້ທຸກດ້ານຂອງວິທະຍາສາດໄດ້ທະວີຄູນເພີ່ມຂຶ້ນ

ໃຫ້ຄິດເບິ່ງວ່າ ໃນຂະນະນີ້ແລະທີ່ປະຊຸມນີ້
ຖ້າບໍ່ມີຄອມພິວເຕີແລະເຄື່ອງສາຍ(ໂປຣເຈັກເຕີ)ພວກເຮົາກໍຄົງບໍ່ສາມາດນຳສະເໜີສິ່ງທີ່ກຳລັງນຳສະເໜີເຫລົ່ານີ້.
ເພາະວ່າພວກເຮົາມີອຸປະກອນເຫລົ່ານີ້ພວກເຮົາຈຶ່ງສາມາດນຳສະເໜີແລະຮັບຟັງຂ່າວສານນີ້ ແລະຄວາມຮູ້ຂອງພວກເຮົາກ່ຽວກັບພະເຈົ້າພະຜູ້ສ້າງຜູ້ເຊິ່ງມີແຜນການໄຖ່ໃຫ້ລອດຈຶ່ງເພີ່ມຂຶ້ນ.

ໃຫ້ຄິດເບິ່ງວ່າເຮົາສາມາດມາຢູ່ທີ່ນີ້ໄດ້ແນວໃດ
ມາເວົ້າແລະສອນພະຄຳພະເຈົ້າໃຫ້ໂຕເຮົາເອງແລະຄົນອື່ນໆໃນທຸກມຸມໂລກໄດ້ແນວໃດ.
ໃຫ້ລອງຄິດເບິ່ງກ່ຽວກັບໂທລະທັດ ໂທລະສັບ ແລະອຸປະກອນໄຟຟ້າຕ່າງໆ
ສິ່ງເຫລົ່ານີ້ກາຍເປັນສິ່ງທີ່ເຫັນປົກກະຕິແລ້ວ.
ຄອມພິວເຕີໄດ້ເຂົ້າມາມບົດບາດສຳຄັນໃນທຸກປະເທດແລະປ່ຽນໂລກເຮົາໃຫ້ກາຍເປັນໂລກແຫ່ງໂລກາພິວັດ.

ຄົນຈຳນວນຫລາຍຈະແລ່ນເຕັ້ນຊອກຫາຄວາມເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນ

ມີຄົນເປັນພັນໆລ້ານໆໃຊ້ເຄື່ອງບິນເປັນພາຫານະໃນການເດີນທາງ ເຮັດໃຫ້ໂລກນີ້ສັ້ນເຂົ້າ
ແລະມະນຸດກໍຍັງສາມາດເດີນທາງອອກນອກໂລກໄປສູ່ອີກດາວເຄາະໜຶ່ງໄດ້ອີກ.
ການໃຊ້ມາໃຊ້ລາ,ໃຊ້ງົວ,ໃຊ້ຄວາຍເປັນພາຫະນາບໍ່ມີອີກແລ້ວ.
ຢູ່ຕາມທະໜົນໜົນທາງກໍເຕັມໄປດ້ວຍລົດລາງພາຫະນະ. ການທີ່ຄົນຢູ່ປະເທດຕ່າງໆມີລົດໃຫຍ່,
ລົດກະບະ, ລົດເກງ ກາຍເປັນສິ່ງທຳມະດາ
ເຂົາມີລົດໃຫຍ່ຢູ່ບ້ານເຂົາກໍບໍ່ຕ່າງຫຍັງກັບເຮົາມີລົດຈັກຫລືລົດຖີບຢູ່ບ້ານລາວເຮົາ
ເພາະວ່າຢູ່ເຂົາແມ່ນໃຜກໍມີກັນ ແລະບາງຄົນກໍມີເປັນສອງເປັນສາມຄັນ. ລົດເມ ລົດໄຟ
ແລະລົດຕ່າງໆໄດ້ເຮັດໃຫ້ມະນຸດເຮົາມີຄວາມສະດວກຂຶ້ນໃນການເດີນທາງ.

ເລື່ອງສອນໃຈໃນຍຸກສຸດທ້າຍ.

(ລູກາ 17:28)
ພະເຍຊູໄດ້ປຽບສະພາບຕ່າງໆໃນໂລກຍຸກສຸດທ້າຍນີ້ໃສ່ກັບເມືອງໂສໂດມແລະເມືອງໂກໂມຣາໃນສະໄ
ໝກ່ອນເຊິ່ງເປັນເມືອງແຫ່ງກິນຫລິ້ນການ ການຜິດຊາຍຍິງ ຜິດເມຍ ຜິດຜົວຄົນອື່ນ
ສອງເມືອງນີ້ເປັນເມືອງທີ່ເຕັມໄປດ້ວຍຄວາມບາບ ຄວາມຜິດ ຄວາມຊົ່ວທີ່ສຸດເທົ່າທີ່ເຄີຍມີມາ
ແລະໃນທີ່ສຸດພະເຈົ້າກໍໄດ້ສົ່ງໄຟຈາກສະຫວັນລົງມາທຳລາຍສອງເມືອງນີ້.

"ໃນສະໄຫມຂອງໂລດກໍເຫມືອນກັນ..."

(ລູກາ 17:30) "ໃນວັນທີ່ບຸດມະນຸດຈະມາປາກົດກໍຈະເປັນຢ່າງນັ້ນ"

(ຢູດາ 7) ຢູດາໄດ້ຂຽນວ່າ "ຢ່າງດຽວກັນກັບເມືອງໂຊໂດມແລະເມືອງໂກໂມຣາທັງເມືອງທີ່ຢູ່ອ້ອມ
ຮອບນັ້ນ ທີ່ໄດ້ມອບຕົວໄວ້ແກ່ຣາຄະຕັນຫາຕິດຕາມການຜິດຊາຍຍິງອັນຜິດທັມມະດາ ກໍປາກົດເປັນ
ຕົວຢ່າງ..."

ອັກຄະສາວົກໂປໂລໄດ້ກ່າວກ່ຽວກັບສອງເມືອງນີ້ວ່າ

(ໂຣມ 1:26:27) "... ພວກຜູ້ຍິງຂອງເຂົາກໍປ່ຽນການສັມພັນຕາມທຳມະຊາດໃຫ້ຜິດທຳມະຊາດໄປ
ຝ່າຍຜູ້ຊາຍກໍເຫມືອນກັນ ໄດ້ເລີກການສັມພັນກັບຜູ້ຍິງຕາມທຳມະຊາດ ແລະຮີບຮ້ອນດ້ວຍໄຟແຫ່ງຣາ
ຄະຕັນຫາທີ່ມີຕໍ່ກັນ ຜູ້ຊາຍກັບຜູ້ຊາຍພາກັນເຮັດການຊົ່ວຫນ້າອັບອາຍຕໍ່ກັນ ..."

(2 ຕີໂມທຽວ 3:2-5) “ເພາະວ່າຄົນທັງຫລາຍຈະເຫັນແກ່ຕົວ ເປັນແກ່ເງິນຄຳ ອວດຕົວ ຈອງຫອງ ຊອບດ່າວ່າ ບໍ່ເຊື່ອຟັງຄວາມພໍ່ແມ່ ເນຣະຄຸນ ເປັນຄົນບໍ່ມີສິນທັມ ເປັນຄົນຂາດມະນຸສທັມ ບໍ່ຍອມຜ່ອນຜັນຜູ້ໃດ ໃສ່ຮ້າຍປ້າຍສີກັນ ບໍ່ຮູ້ຈັກບັງຄັບຕົນ ມີໃຈໂຫດຮ້າຍ ເປັນຄົນບໍ່ຮັກການດີ ເປັນຄົນທໍຣະຍົດ ດື້ດ້ານ ອວດສະຫາວ ແລະເປັນຄົນຮັກຄວາມສນຸກຫລາຍກວ່າຮັກພຣະເຈົ້າ ເຂົາກໍເຮັດເຫມືອນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ ແຕ່ວ່າຣິດອຳນາດຂອງການນັບຖືນັ້ນ ເຂົາກໍປະຕິເສດເສັຽ ...”

(2 ຕີໂມທຽວ 3:13) “ແຕ່ຄົນຊົ່ວຮ້າຍແລະຄົນປອມຕົວຈະກຳເລີບທະວີຂຶ້ນໄປ ລໍ້ລວງຄົນອື່ນໃຫ້ຫລົງ ແລະຕົວເຂົາເອງກໍຈະຖືກລໍ້ລວງເຫມືອນກັນ”

ພະຄຣິດທຽມເທັດແລະຄຳພະຍາກອນຫລອກລວງ

(ມັດທາຍ 24:23,24,26)
ພະຄຣິດໄດ້ເຕືອນວ່າຈະມີພະຄຣິດທຽມເທັດແລະຄຳພະຍາກອນຫລອກລວງ “ໃນເວລານັ້ນຖ້າຜູ້ໃດຈະບອກພວກທ່ານວ່າ ‘ເບິ່ງແມ່, ອົງພຣະຄຣິດຢູ່ທີ່ນີ້” ຫລື “ຢູ່ທີ່ນັ້ນ’ ຢ່າຊູ່ເຊື່ອ ດ້ວຍວ່າຈະມີພຣະຄຣິດທຽມ ແລະຫມໍທຳນວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງຫມາຍສຳຄັນອັນໃຫຍ່ແລະການອັດສະຈັນຕ່າງໆ ເພື່ອຖ້າເປັນໄດ້ ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ” “ດັ່ງນັ້ນຖ້າເຂົາບອກພວກທ່ານວ່າ ‘ເບິ່ງແມ່, ທ່ານຜູ້ນັ້ນຢູ່ໃນປ່າ’ ພວກທ່ານຢ່າໄດ້ອອກໄປ ຫລືຖ້າເຂົາບອກວ່າ ‘ເບິ່ງແມ່, ເພິ່ນຢູ່ໃນຫ້ອງ’ ກໍຢ່າຊູ່ເຊື່ອ”

(ມັດທາ 24:27) ພວກເຮົາບໍ່ຈຳເປັນຈະຕ້ອງອອກໄປບ່ອນໃດ ເພາະພະເຍຊູໄດ້ຕັດວ່າ “ດ້ວຍວ່າຟ້າແມບເຫລື້ອມອອກມາແຕ່ທິດຕາເວັນອອກ ສ່ອງໄປເຖິງທິດຕາເວັນຕົກຢ່າງໃດ ການທີ່ບຸດມະນຸດຈະສະເດັດມາກໍຈະເປັນຢ່າງນັ້ນ”

(ພະນິມິດ 1:7) ອີກເທື່ອໜຶ່ງ ອັກຄະສາວົກໂຢຮັນ ໄດ້ບອກເຮົາວ່າ “ເບິ່ງແມ່, ພຣະອົງຈະສະເດັດມາມີເມກເປັນຂະບວນແຫ່ ຕາມທຸກຫນ່ວຍຈະເຫັນພຣະອົງ ແລະຄົນເຫລົ່ານັ້ນທີ່ແທງພຣະອົງຈະເຫັນເຫມືອນກັນ ມຸດຊາດທົ່ວໂລກຈະຮ້ອງໄຫ້ຮໍ່າໄຮເພາະພຣະອົງ ຈະເປັນໄປຢ່າງນັ້ນ ອາແມນ”

ເຮົາຈະເຫັນພະອົງເມື່ອພະອົງສະເດັດກັບມາ!
ບໍ່ຈຳເປັນທີ່ຈະມີຄົນມາບອກເຮົາວ່າພະຄຣິດໄດ້ສະເດັດລົງມາພ້ອມດ້ວມທູດສະຫວັນຂອງພະອົງ!

ຂ່າວປະເສີດແກ່ທຸກຄົນໃນໂລກ.

ທຸກຄຳພະຍາກອນ ທຸກເຄື່ອງໝາຍ(ໝາຍສຳຄັນ)ທີ່ພະຄຳພີໄດ້ພະຍາກອນໄວ້ໄດ້ເກີດຂຶ້ນໝົດແລ້ວ ຍັງເຫລືອພຽງແຕ່ອັນດຽວຫລືສິ່ງດຽວເທົ່ານັ້ນທີ່ຍັງບໍ່ທັນເກີດຂຶ້ນ.
ແລະກໍຊອກຮູ້ວ່າສິ່ງຄືອັນໃດໄດ້ໃນພະຄຳ ມັດທາຍ 24:14

(ມັດທາຍ 24:14) ພະເຍຊູໄດ້ຕັດວ່າ "ຂ່າວປະເສີດເຣື່ອງຣາຊອານາຈັກນີ້ຈະໄດ້ປະກາດໄປທົ່ວໂລກ ເພື່ອເປັນຄຳພຍານແກ່ທຸກໆຊາດແລ້ວທີ່ສຸດປາຍຈະມາເຖິງ"

ໃນພະຄຳພະນິມິດ, ພະເຈົ້າໄດ້ຕັດກ່ຽວກັບເຫດການນີ້

(ພະນິມິດ 14:6) "...ຂ້າພະເຈົ້າໄດ້ເຫັນເທວະດາອີກຕົນນຶ່ງບິນໄປໃນທ້ອງຟ້າ ມີຂ່າວປະເສີດອັນຕລອດໄປເປັນນິດເພື່ອນຳໄປປະກາດແກ່ຊາວໂລກທັງປວງ ທຸກປະເທດ ທຸກຕະກູນ ທຸກພາສາ ແລະທຸກຊາດ"
ເຮົາຮູ້ໄຫມບໍ່ວ່າເຮົາຈະເຫັນເຮົາກຳລັງຈະເຫັນສິ່ງນີ້ເກີດຂຶ້ນຕາມຄຳພະຍາກອນໃນໄວໆນີ້ ໃນຄືນນີ້ ໃນຕອນຈົບຂອງການປະຊຸມນະມັດສະການນີ້?

ນີ້ເປັນພຽງສ່ວນໜຶ່ງຂອງຄຳເທດສະໜາກ່ຽວກັບຂ່າວດີອັນຕະຫລອດໄປເປັນນິດທີ່ມີມາເຖິງທຸກໆຄົນ ມັນເປັນສິ່ງທີ່ໜ້າປະທັບໃຈຫລາຍທີ່ວ່າຂ່າວປະເສີດແມ່ນກຳຖືກປະກາດແລະແຜ່ອອກໄປໂດຍສື່ຕ່າງໆເຊັ່ນ ທໍລະທັດ, ວິທະຍຸ, ການຊຸມນຸມປະກາດ, ອິນເຕີເນັດ, ສັນຍານເຄໂບ້ຕ່າງໆ ໃນໂລກນີ້.

ດານີເອນໄດ້ກ່າວ "ຄວາມຮູ້ຂອງມະນຸດຈະເພີ່ມຂຶ້ນ" ໃນຍຸກວິກິດສຸດທ້າຍຂອງປະຫວັດສາດໂລກ, ໜັງສືດານີເອນຈະຕ້ອງຖືກເຜີຍຕາປະທັບອອກ
ບໍ່ພຽງແຕ່ຄວາມຮູ້ທາງດ້ານວິທະຍາສາດຂອງມະນຸດເທົ່ານັ້ນທີ່ເພີ່ມຂຶ້ນ
ຄວາມຮູ້ກ່ຽວກັບແຜນການຂອງພະເຈົ້າກໍຈະເພີ່ມຂຶ້ນນຳ

ເວລາໃກ້ຈະໝົດແລ້ວ

ຄວາມບາບຄວາມຜິດຄວາມຊົ່ວທີ່ຕ້ອງເຮັດໃຫ້ພະເຈົ້າລ້າງໂລກໃນສະໄໝຂອງໂນອາກໍກຳລັງເກີດຂຶ້ນກັບໂລກປະຈຸບັນນີ້ຄືກັນ.
ຖ້າບໍ່ມີຄຳທຳນວາຍຂອງພະຄຣິດກ່ຽວກັບວັນສຸດທ້າຍຂອງໂລກແລະການສະເດັດກັບມາຕັ້ງອານາຈັກຂອງພະອົງ ມະນຸດກໍຄົງມີຄວາມຫວັງນ້ອຍນິດໃນອານາຄົດແລະການຕໍ່ສູ້ກັບຊີວິດຫລືອາດບໍ່ມີເລີຍກໍໄດ້.
ພໍເບິ່ງໄປຕາມສິ່ງທີ່ກຳລັງເກີດຂຶ້ນທຸກມື້ນີ້ແລ້ວ ເບິ່ງຄືວ່າມະນຸດກຳລັງທຳລາຍໂຕເອງ

ພະເຍຊູໄດ້ປຽບຄົນໃນປະຈຸບັນນີ້ໃສ່ຄົນໃນສະໄໝຂອງໂນອາ.
ຄົນໃນສະໄໝຂອງໂນອາມົວແຕ່ຫຍຸ້ງກັບການທຳມາຫາກິນໂດຍບໍ່ສົນໃຈບໍ່ຫຍຸ້ງກ່ຽວຫຍັງທີ່ເປັນສິນລະທຳຖືກຕ້ອງ.

ພະເຍຊູໄດ້ຕັດໃນພະທຳ ມັດທາຍ 24:37-39 ວ່າ "ດ້ວຍວ່າສະໄໝຂອງໂນເອໄດ້ເປັນຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ. ເພາະວ່າເມື່ອກ່ອນວັນນ້ຳຖ້ວມນັ້ນ ຄົນທັງຫລາຍໄດ້ກິນແລະດື່ມ ໄດ້ແຕ່ງງານແລະຍົກໃຫ້ເປັນຜົວເມັຽກັນ ຈົນເຖິງວັນທີ່ໂນເອໄດ້ເຂົ້າໄປໃນນາວາ ແລະນ້ຳໄດ້ມາຖ້ວມກວາດເຂົາໄປໂດຍບໍ່ທັນຮູ້ຕົວຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ"

ໃນໜັງສືປະຖົມມະການ ເຮົາຈະເຫັນສ່ິ່ງທີ່ເວົ້າມານີ້ແຈ້ງຂຶ້ນຕື່ມ

(ປະຖົມມະການ 6:5) "ເມື່ອພຣະຜູ້ເປັນເຈົ້າເຫັນວ່າ ມະນຸດໂຫດຮ້າຍສາມານມີຢູ່ທຸກຫົນທຸກແຫ່ງແລະຄວາມຄິດຊົ່ວກໍບັງຄັບຈິດໃຈເຂົາຢູ່ທຸກເວລາ"

ເບິ່ງຄືວ່າໃນຕາມສືິ່ຕ່າງໆເຊັ່ນ ໜັງສື, ວາລະສານ, ໂທລະທັດ, ອິນເຕີເນັດ, ໂຄດສະນາ ແລະອື່ນອື່ນ ມີສື່ລາມົກໄຮ້ສິນລະທຳເຕັມໄປໝົດ ແລະເບິ່ງແລ້ວຄົນກໍມັກເບິ່ງສິ່ງບໍ່ດີເຫລົ່ານີ້ແທ້ໆ ລູກທີ່ມັກສິ່ງເຫລົ່ານີ້ ຄົງເຮັດໃຫ້ຜູ້ເປັນພໍ່ເປັນແມ່ໜ້າອາຍຂະໜາດ.

ການຂ້າຟັງລັນແທງກັນ

ໂລກນີ້ເຕັມໄປດ້ວຍຄວາມຊົ່ວຮ້າຍໜ້າກຽດໜ້າຊັງ ແລະກໍເຕັມໄປດ້ວຍການຂ້າຟັນລັນແທງ ພະທຳ ປະຖົມມະການ 6:11ໄດ້ບອກເຮົາວ່າ "ແຕ່ວ່າຄົນທັງຫລາຍໄດ້ກະທຳຜິດຕໍ່ນ້ຳພຣະທັຍຂອງພຣະອົງ ແລ້ວຄວາມຊົ່ວຂອງມະນຸດກໍໄດ້ມີຢູ່ທຸກທີ່ທຸກບ່ອນ" ໃນພະຄຳພີພາສາອັງກິດ ເຂົາໃຊ້ຄຳ "ຂ້າຟັນລັນແທງກັນ (Vilolence)" ແທນຄຳວ່າ "ຄວາມຊົ່ວ"
ຈະເປັນຄຳໃດກໍແລ້ວແຕ່ຄຳສອງຄຳນີ້ບົ່ງບອກເຖິງການກະທຳທີ່ບໍ່ດີ

ທຸກມື້ນີ້ ໃນຫລາຍປະເທດ ການຂ້າຟັນລັນແທງການໄດ້ມີຢູ່ທົ່ວ. ໃນສະຫະລັດອາເມລິກາ
ມີນັກຮຽນໃນຫລາຍໆໂຮງຮຽນໄດ້ດຶງປືນອອກມາຍິງຂ້າເພື່ອນຮ່ວມຮຽນຫລືຄົນບໍລິສຸດ.
ລັດຖະບານຂອງຫລາຍປະເທດໄດ້ພະຍາຍາມຍຶດເອົາປືນຈາກພົນລະເມືອງຂອງເຂົາ
ຜູ້ທີ່ອ້າງວ່າມີປືນເພື່ອໄວ້ປ້ອງກັນໂຕເອງ
ຄິດວ່າວິທີນີ້ກໍຄົງບໍ່ໄດ້ຜົນເທົ່າກັບການສຶກສາໃຫ້ເຂົາປ່ຽນແປງການປະພຶດຂອງເຂົາ.

(ມັດທາຍ 24:12) ພະຄໍາພີໄດ້ບອກໃຫ້ເຮົາຮູ້ວ່າ "ຄວາມຮັກຂອງຄົນສ່ວນຫລາຍຈະເຢັນລົງ ເພາະຄວາມອະທັມແຜ່ກວ້າງອອກໄປ"

ເວົ້າແລ້ວກໍເປັນຕາຕົກໃຈເປັນຫຍັງໂລກເຮົາຄືມາເປັນແບວນີ້!

(ດານີເອນ12:4) ໃນທ້າມກາງໝາຍສໍາຄັນແຫ່ງວັນສຸດທ້າຍ ກໍຍັງມີຂ່າວດີຢູ່
ພະຄໍາພີໄດ້ບອກເຮົາໃນພະຄໍາ ດານີເອນ 12:4 ວ່າ "ດານີເອນເອີຍ ບັດນີ້ເຈົ້າຈົ່ງຮໍາຫນັງສືມ້ວນນັ້ນໄວ້ ແລະຕີຕຣາປະທັບໄວ້ຈົນເຖິງເວລາສຸດທ້າຍ... ຄົນຈໍານວນຫລາຍຈະແລ່ນເຕັ້ນຊອກຫາຄວາມເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນ" ສິ່ງນີ້ພວກເຮົາກໍເຫັນແລ້ວ. ໃນວັນສຸດທ້າຍຂອງປະຫວັດສາດໂລກ
ໜັງສືພະທໍາດານີເອນຈະຖືກເປີດອອກມາ
ແລະເຮັດໃຫ້ຄວາມຮູ້ໃນແຜນການຂອງພະເຈົ້າສໍາລັບໂລກເພີ່ມຂຶ້ນ.

ພະເຍຊູຕັດໃຫ້ຜູ້ທີ່ມາຟັງພະອົງມຸ່ງຄວາມສົນໃຈໄປທີ່ເລື່ອງຂອງໂນອາ
ເຊິ່ງຫາພົບໄດ້ໃນພະທໍາປະຖົມມະການ ບົດທີ 6 ແລະ 7. ມະນຸດທີ່ອາໄສໃນສະໄໝຂອງໂນອາ
ເຂົາໄດ້ເຕັມໄປດ້ວຍການເຮັດບາບການເຮັດຊົ່ວຕ່າງໆ.
ເຫດການທີ່ເຂົາເຮັດມັນເລວຮ້າຍຫລາຍຈົນພະຄໍາພີໄດກ່າວວ່າພະເຈົ້າຊົງເສຍພະໄທທີ່ພະອົງສ້າງເຂົາມາ. ພະເຈົ້າຈະຊ່ອຍໂລກແລະມວນມະນຸດຊາດທີ່ພະອົງສ້າງມາໄດ້ແນວໃດ?

ພະເຈົ້າມີແຜນ.

ພະເຈົ້າໄດ້ເອີ້ນໃຫ້ໂນອາອອກໄປຊ່ອຍເຫລືອຄົນທີ່ຢາກຈະລອດ

(ປະຖົມມະການ 6:13,14) "ພຣະເຈົ້າຊົງກ່າວກັບໂນອາວ່າ, 'ເຮົາໄດ້ຕັດສິນໃຈຈະທໍາລາຍມະນຸດສະໂລກແລ້ວ ເຮົາຈະທໍາລາຍພວກເຂົາຈົນຫມົດສິ້ນ ເພາະວ່າໂລກນີ້ເຕັມໄປດ້ວຍການຊົ່ວຮ້າຍຂອງເຂົາເຈົ້າຈົ່ງສ້າງເຮືອດ້ວຍໄມ້ແກ່ນອັນແຫນ້ນຫນາສໍາລັບເຈົ້າ...'"

ສິ່ງທີ່ແປກສໍາລັບໂນອາເມື່ອພະເຈົ້າຕັດບອກລາວນັ້ນກໍຄືພະເຈົ້າໄດ້ບອກໃຫ້ລາວສ້າງເຮືອໃຫຍ່
ທັ້ງທີ່ວ່າໃນຕອນນັ້ນບໍ່ເຄີຍມີລົມຟ້າຝົນຈັກເທື່ອ! ພະຄໍາພີໄດ້ຂຽນໄວ້ວ່າຝົກບໍ່ເຄີຍຕົກມາກ່ອນເລີຍ.
ແຕ່ໂນອາເປັນຄົນທີ່ມີຄວາມເຊື່ອເຂັ້ມແຂງຫລາຍ ລາວເຮັດຕາມທີ່ພະເຈົ້າບອກໃຫ້ລາວເຮັດທຸກຢ່າງ.

ໂນອາໃຊ້ເວລາສ້າງເຮືອຕັ້ງ 120
ປີແລະໃນເວລາດຽວກັນກໍໄດ້ບອກເຕືອນໃຫ້ຜູ້ຄົນກ່ຽວກັບໄພພິບັດທີ່ກໍາລັງຈະມາເຖິງ
ແຕ່ພວກເຂົາກັບຫົວຂວັນເຍາະເຍີ້ຍໂນອາກັບຄອບຄົວຂອງລາວທີ່ພວກເຂົາພາກັນສ້າງເຮືອ.

ພະຄຳພີໄດ້ບອກວ່າພະເຈົ້າໄດ້ສັ່ງໃຫ້ໂນອາສ້າງເຮືອຂະໜາດໃຫຍ່
ສຳລັບທຸກຄົນໃນຄອບຄົວຂອງລາວແລະສັດທຸກສາຍພັນ. ແລະໃນທີ່ສຸດໂນອາກໍສ້າງເຮືອສຳເລັດ

ແລ້ວນົກກໍບິນລົງຈາກຟ້າເຂົ້າມາໃນເຮືອ ແລະສັດຕ່າງໆນາໆໃນປ່າກໍເຂົ້າມາໃນເຮືອເປັນ
ສັດທຸກຊະນິດ ຊະນິດລະຄູ່ກໍໄດ້ຍ່າງເຂົ້າມາໃນເຮືອ ສັດເຫລົ່ານັ້ນມີສັດບໍ່ເປັນມົນທິນແນວລະເຈັດຄູ່
ແລະທີ່ເປັນມົນທິນແນວລະຄູ່
ໂນອາແລະຄອບຄົວຂອງລາວກໍພາສັດຕ່າງໆເຫລົ່ານີ້ເຂົ້າໄປຢູ່ໃນຫ້ອງຕ່າງໆທາກທີ່ຕຽມໄວ້
ຜູ້ຄົນທີ່ເຫັນສັດຕ່າງໆນາໆເຂົ້າໄປໃນເຮືອ ພວກເຂົາບໍ່ມີເອະໃຈຫລືຄິດຫຍັງກ່ຽວກັບສິ່ງນີ້ເລີຍ
ໂນອາກໍຮ້ອງເຊີນຊວນເຂົາໃຫ້ເຂົ້າມາໃນເຮືອ ແຕ່ກໍບໍ່ມີໃຜເຂົ້າມາ. ມີແຕ່ໂນອາ ເມຍຂອງລາວ
ລູກຊາຍສາມຄົນລາວແລະພັນລະຍາຂອງພວກເຂົາ

(ປະຖົມມະການ 7:16) ພະຄຳພີໄດ້ກ່າວວ່າ “...ພຣະອົງກໍຊົງອັດປະຕູເຮືອ”

ພໍສັດເຂົ້າໄປໃນເຮືອໝົດທຸກໂຕແລ້ວ ພະເຈົ້າບໍ່ໄດ້ສົ່ງຝົນມາທັນທີ
ພະເຈົ້າໃຫ້ເວລາຄົນທີ່ຢູ່ນອກເຮືອເຂົ້າມາໃນເຮືອເຖິງ 7 ວັນ ແຕ່ກໍບໍ່ມີໃຜເຂົ້າມາ.
ພວກເຂົາບໍ່ເຫັນຝົກຕົກພວກເຂົາກໍຫົວເລາະເຍາະເຍີ້ຍໂນອາແລະຄອບຄົວຂອງລາວ
ເຂົາຫົວຂວັນໄດ້ບໍ່ດົນ ເຂົາກໍຕ້ອງຢຸດ ເມື່ອເຫດການຕໍ່ໄປນີ້ເກີດຂື້ນ

(ປະຖົມມະການ 7:10,11,12,17,) ພະຄຳພີໄດ້ເວົ້າເຖິງສິ່ງເກີດຂື້ນໃນວັນທີ 8
ວ່າເປັນເຫດການທີ່ໜ້າຈັບຕາມອງ “ຫລັງຈາກເຈັດວັນແລ້ວ ຝົນກໍໄດ້ຕົກລົງຖ້ວມໂລກ ໃນວັນທີ່ສິບ
ເຈັດເດືອນທີ່ສອງ ເມື່ອໂນອາມີອາຍຸຫົກຮ້ອຍປີ ຟ້າກໍມືດຄຶ້ມແລ້ວຖອກເທທ່າຝົນລົງມາສູ່ໂລກ ນ້ຳໃນບໍ່
ໃນເຫວແລະຫ້ວຍຮ່ອງກໍພຸ່ງຂື້ນ ຝົນຕົກບໍ່ຂາດສາຍໃນແຜ່ນດິນໂລກ ສີ່ສິບວັນສີ່ສິບຄືນ ຄັນແລ້ວຝົນກໍ
ເລີ້ມຕົກບໍ່ຂາດສາຍຕລອດສີ່ສິບວັນສີ່ສິບຄືນ. ນ້ຳໄດ້ຍີ່ງສູງຂື້ນຢ່າງໄວວາ
ຜູ້ຄົນທີ່ຢູ່ນອກເຮືອກໍພາກັນແລ່ນຂື້ນໄປເທິງພູເຂົາສູງຕ່າງໆ
ແຕ່ວ່າໃນທີ່ສຸດນ້ຳກໍຖ້ວມພູເຂົາສູງທຸກໜ່ວຍໃນໂລກ
ແລະພວກເຂົາກໍບໍ່ມີບ່ອນທີ່ຈະໜີໄປຢູ່ເພື່ອເອົາຊີວິດລອດ

ພະທຳປະຖົມມະການ 7:20 ໄດ້ບອກເຮົາວ່ານ້ຳໄດ້ຖ້ວມພູຜາເຫລົ່ານັ້ນສູງຂື້ນໄປອີກ 15 ສອກ
ຫລືປະມານ 6.5 ແມັດ ແລະທຸກສິ່ງມີຊີວິດໃນໂລກກໍບໍ່ເຫລືອຫລໍຍັງ
ແລະນ້ຳຍັງໄດ້ຖ້ວມພູຜາເຫລົ່ານັ້ນຂື້ນໄປອີກສິບຫ້າສອກ

(ປະຖົມມະການ 7:23) "ທຸກໆສິ່ງທີ່ມີຊີວິດຢູ່ໃນໂລກຄື ນົກ ສັດທຸກຊະນິດຕລອດທັງຄົນກໍຈົມນໍ້າຕາຍ ເວັ້ນໄວ້ແຕ່ຄອບຄົວຂອງໂນອາ ແລະສັດທີ່ມີຢູ່ໃນເຮືອທີ່ນັ້ນ"

ພະເຍຊູໄດ້ກ່າວວ່າການສະເດັດກັບມາຄັ້ງທີສອງຂອງພະອົງຈະຄ້າຍຄືກັນກັບເຫດການໃນສະໄໝຂອງໂນອາ. ຜູ້ຄົນຈະມີເວລາສະໜຸກສະໜານ ແຕ່ບໍ່ມີເວລາໃຫ້ກັບພະເຈົ້າ!
ພວກເຂົາຮັກຄວາມສະໜຸກສະໜານ ຫລືຮັກການຫລິ້ນກິນຫລາຍກວ່າຮັກພະເຈົ້າ.
ວັນາທີສຸດທ້າຍຂອງໂລກໃກ້ເຂົ້າມາແລ້ວ.
ອີກບໍ່ດົນບຸດຂອງພະເຈົ້າຈະສະເດັດລົງມາຈາກຟ້າສະຫວັນພ້ອມດ້ວຍເທວະດາຈຳນວນນັບບໍ່ຖ້ວນ
ພະເຈົ້າກຳລັງເຝົ້າມອງເບິ່ງໂລກບໍ່ແມ່ນເພື່ອທີ່ຈະທຳລາຍ
ແຕ່ເພື່ອທີ່ຈະຊ່ອຍປະຊາຊົນຂອງພະອົງກັບຄືນບ້ານ. ບ້ານນັ້ນກຳລັງຄອຍຖ້າຜູ້ທີ່ຈະເຂົ້າໄປຢູ່.
ນີ້ເປັນເລື່ອງຈິງ

ໃນຂະນະທີ່ພວກເຮົາເບິ່ງໄປໃນໂລກນີ້, ພວກເຮົາສາມາດແນ່ໃຈໄດ້ເລີຍວ່າ
ພະເຍຊູຈະສະເດັດມາໄວໆແລ້ວ ສິ່ງນີ້ບໍ່ຕ່າງຫຍັງກັບຕອນທີ່ພະອົງສະເດັດເຂົ້າມາໃນໂລກເທື່ອທຳອິດ
ພະເຈົ້າໄດ້ສະແດງໝາຍສຳຄັນໃຫ້ຮູ້ຫລາຍຢ່າງວ່າພະເຍຊູຈະສະເດັດມາໃນໂລກຕອນນັ້ນ.

ນາລິກາໄດ້ໝູນມາໄດ້ 4,000 ປີແລ້ວ
ພະເຈົ້າໄດ້ສົ່ງທູດສະຫວັນແລະຜູ້ພະຍາກອນຫລາຍຄົນມາບອກເຖິງການສະເດັດມາຂອງພະອົງ.

(ໂຢຮັນ 1:11) ເປັນເລື່ອງເສົ້າຫລາຍທີ່ຈະກ່າວ "ພຣະອົງໄດ້ສະເດັດມາຍັງບ້ານເມືອງຂອງພຣະອົງ ແລະຊາວບ້ານຊາວເມືອງຂອງພຣະອົງບໍ່ໄດ້ຕ້ອນຮັບພຣະອົງ" ເພາະພວກເຂົາບໍ່ພ້ອມສຳລັບພະອົງ

ພີ່ນ້ອງທີ່ຮັກ, ພະອົງໄດ້ບອກໃຫ້ເຮົາຮູ້ເຖິງໝາຍສຳຄັນຕ່າງໆເຖິງການສະເດັດມາຂອງພະອົງໃນໄວໆນີ້

(ມັດທາຍ 24:33,34) ພະເຍຊູໄດ້ກ່າວວ່າ, "ຢ່າງນີ້ແຫລະ, ພວກທ່ານກໍເໝືອນກັນ ເມື່ອເຫັນເຫດການເຫລົ່ານັ້ນ ຈົ່ງຮູ້ວ່າພຣະອົງສະເດັດມາໃກ້ຈະເຖິງປະຕູແລ້ວ ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນໃນສະໄຫມນີ້ຈະບໍ່ລ່ວງຫລັບໄປກ່ອນເຫດການທັງປວງນີ້ບັງເກີດຂຶ້ນ"

ເຮົາຈະຮັບເອົາພະອົງບໍ່ ຫລືຈະປ່ອຍໃຫ້ພະອົງຜິດຫວັງ? ເວລາໃກ້ເຂົ້າມາທຸກເມື່ອແລ້ວ
ເຮົາບໍ່ມີຫຍັງຈະຕ້ອງເສຍດາຍອີກແລ້ວ.
ເຮົາຈະຍອມມອບໃຈໃຫ້ພະເຈົ້າແລະຮ້ອງໃຫ້ພະອົງຊ່ອຍຕຽມໂຕເຮົາສຳລັບການສະເດັດມາຂອງພະອົງໃນໄວໆນີ້ບໍ່?

ພີ່ນ້ອງຈະບໍ່ໃຈຂອງພີ່ນ້ອງໃຫ້ພ້ອມທີ່ຈະພົບຜູ້ທີ່ສ້າງພີ່ນ້ອງມາ
ແລະເປັນຜູ້ທີ່ຮັກແລະຖະຫວາຍຊີວິດຂອງພະອົງເພື່ອພີ່ນ້ອງບໍ່?
ຂໍເຊີນພີ່ນ້ອງທຸກຄົນມອບໃຈໃຫ້ພະອົງ ຖ້າມົວມີແຕ່ຖ້າ ມັນອາດຈະສາຍເກີນໄປ
ນີ້ຄືເວລາທີ່ພີ່ນ້ອງຈະຕ້ອງຕັດສິນໃຈ ພະຄຳພີໄດ້ກ່າວວ່າ “ມື້ນີ້ແມ່ນມື້ແຫ່ງຄວາມລອດພົ້ນ.” ຢ່າຖ້າ
ຢ່າລັງເລໃຈ ຮີບຕັດສິນໃຈແຕ່ດຽວນີ້ ມອບຫົວໃຈໃຫ້ກັບພະເຈົ້າ
ແລະຂໍໃຫ້ພະອົງຊ່ອຍພີ່ນ້ອງໃຫ້ຕຽມພ້ອມທີ່ຈະພົບພະອົງເມື່ອພະອົງສະເດັດມາໃນໄວໆນີ້